# ສັກກະຍະພາບໃນການຜະລິດ ແລະ ການພັດທະນາສິນຄ້າເພື່ອສ້າງເປັນສິນຄ້າ ODOP ຂອງປະຊາຊົນໃນນະຄອນຫຼວງພະບາງ

**ສຸດຖາວອນ ສີອຸດົມພັນ*, ລັດຕະນາ ອິນທະວິຈິດ, ຄຳສອນ ສອນໄຊ, ຍຸດທະສັກ ກິ່ງສະດາ, ພັດສາ ດວງປະສິດ, ວິລະໄຊ ແສງຈັນ ແລະ ພຸດທະລັກ ພັນທຸອາມາດ**

*ພາກວິຊາ ເສດຖະສາດ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ, ມະຫາວິທະຍາໄລສຸພານຸວົງ, ສປປ ລາວ*

***ຕິດຕໍ່ພົວພັນ:**

*ສຸດຖາວອນ ສີອຸດົມພັນ, ຄະນະເສດຖະສາດ ແລະ ການທ່ອງທ່ຽວ,*

*ໂທ: +856 20 2222 3325,*

*ອີເມວ:*

*soutthavone2030.inc@gmail.com*

**ຂໍ້ມູນບົດຄວາມ:**

*ການສົ່ງບົດ: 07 ເມສາ 2023*

*ການປັບປຸງ: 15 ຕຸລາ 2023*

*ການຕອບຮັບ: 29 ຕຸລາ 2023*

## ບົດຄັດຫຍໍ້

ບົດຄົ້ນຄວ້ານີ້ມີຈຸດປະສົງ ເພື່ອສຶກສາສັກກະຍະພາບໃນການຜະລິດ ແລະ ພັດທະນາສິນຄ້າເພື່ອສ້າງເປັນສິນຄ້າ, ສາປັດໄຈທີ່ມີຄວາມສຳພັນກັບສັກກະຍະພາບໃນການຜະລິດ ແລະ ພັດທະນາສິນຄ້າ ແລະ ທ່າອ່ຽງໃນການຜະລິດ ແລະ ການພັດທະນາສິນຄ້າເພື່ອສ້າງເປັນສິນຄ້າ ODOP ຂອງປະຊາຊົນໃນນະຄອນຫຼວງພະບາງ. ໂດຍຜົນໄດ້ຮັບຈາການຄົ້ນຄວ້າຄັ້ງນີ້ ຈະມີຜົນຕໍ່ບັນດາພາກສ່ວນຕ່າງໆທີ່ກ່ຽວຂ້ອງເຊັ່ນ: ເປັນຂໍ້ມູນໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງເພື່ອນຳໄປປັບປຸງການຜະລິດ ແລະ ພັດທະນານາສິນຄ້າ, ເປັນຂໍ້ມູນພື້ນຖານໃຫ້ກັບພາກລັດ ເພື່ອນຳໄປເປັນແນວທາງໃນການຈັດຕັ້ງປະຕິບັດນະໂຍບາຍສົ່ງເສີມການຜະລິດ ແລະ ພັດທະນາສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນຂອງປະຊາຊົນໃນນະຄອນຫຼວງພະບາງ ກໍ່ຄື ສປປ ລາວອີກດ້ວຍ. ເຊິ່ງຜົນການວິເຄາະຂໍ້ມູນພົບວ່າ: ປະຊາຊົນຜູ້ທີ່ເຮັດການຜະລິດສິນຄ້າແມ່ນມີສັກກະຍະພາບໃນການຜະລິດ ແລະ ພັດທະນາສິນຄ້າເພື່ອສ້າງເປັນສິນຄ້າ ODOP ໃນລະດັບສູງ ເຊິ່ງເປັນຜະລິດຕະພັນທີ່ເນັ້ນຝີມືແຮງງານ, ທີ່ມີຄວາມເປັນເອກະລັກ ແລະ ສື່ເຖິງວັດທະນະທຳຂອງຄົນລາວເຮົາ ໂດຍສະເພາະແມ່ນຊາວນະຄອນຫຼວງພະບາງ, ມີນຳໃຊ້ວັດຖຸດິບຈາກທຳມະຊາດເຂົ້າໃນການຜະລິດ, ມີການອອກແບບຜະລິດຕະພັນໂດຍການນຳໃຊ້ພູມປັນຍາທ້ອງຖິ່ນ ແລ້ວນຳມາປັບປຸງພັດທະນາໃຫ້ເປັນລວດລາຍສະເພາະໃຫ້ເຂົ້າກັບສັງຄົມປັດຈຸບັນ ເຊິ່ງສອດຄ່ອງກັບມາດຖານໃນຂອງສິນຄ້າ ODOP ຂອງ ສປປ ລາວ ແລະ ປັດໄຈທີ່ມີຄວາມສຳພັນກັບສັກກະຍະພາບໃນດ້ານການຜະລິດ ແລະ ການພັດທະນາຜະລິດຕະພັນ ເພື່ອສ້າງເປັນສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນໃນນະຄອນຫຼວງພະບາງປະກອບມີ: ປັດໄຈການຜະລິດ, ປັດໄຈດ້ານຄຸນຄ່າຂອງຜະລິດຕະພັນ, ປັດໄຈດ້ານປັດໄຈດ້ານຜົນໄດ້ຮັບ, ປັດໄຈດ້ານລະດັບຄວາມຮັບຮູ້ກ່ຽວກັບສິນຄ້າ ODOP ຂອງປະຊາຊົນ, ປັດໄຈດ້ານປະສົບການໃນການຜະລິດ ແມ່ນມີຄວາມສຳພັນໄປໃນທິດທາງດຽວກັນກັບສັກກະຍະພາບໃນການຜະລິດ ແລະ  ພັດທະນາສິນຄ້າເພື່ອສ້າງເປັນສິນຄ້າ ODOP ປະຊາຊົນໃນນະຄອນຫຼວງພະບາງ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05 ແລະ ມີທ່າອ່ຽງໃນການຜະລິດ ແລະ ພັດທະນານາເພີ່ມຂຶ້ນໃນສັດສ່ວນ 87.7%, ໂດຍເນັ້ນການອອກແບບຜະລິດຕະພັນ ໄປໃນດ້ານຄວາມເປັນເອກະລັກທ້ອງຖິ່ນໃຫ້ຫຼາຍຂຶ້ນ ແລະ ຕາມຄວາມຕ້ອງການຂອງລູກຄ້າ ແລະ ຍັງມີຄວາມຕ້ອງໃນການຊ່ວຍໃນດ້ານ: ດ້ານການສ້າງພາບລັກ ແລະ ກາສິນຄ້າ, ການພັດທະນາຜະລິດຕະພັນ ແລະ ການບັນຈຸ ເປັນຫຼັກ.

**ຄຳສັບສຳຄັນ**: *ສັກກະຍະພາບ, ການຜະລິດ, ສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນ*

# The Potentials and Development of the One District One Product in Luang Prabang Capital

**Soutthavone SIOUDOMPHAN*, Lattana INTHAVICHIT, Khamsone SONESAI, Youtthasack KINGSADA, Phatsa DUANGPASITH, Vilaxay SEANGCHAN, Phoutthalack PHANTHOUAMATH**

*Department of Economics Faculty of Economics and Tourism Souphanouvong University, Lao PDR*

****Correspondence:*** *Soutthavone SIOUDOMPHAN, Faculty of Economics and Tourism, Tel: +856 020 22223325, Email:* southavone2030.inc@gmail.com

***Article Info:***
*Submitted: Apr 07, 2023*
*Revised: Oct 15, 2023*
*Accepted: Oct 29, 2023*

## Abstract

This research aims to examine the capability of producing and developing products for official acceptance of One District One Product (ODOP) of local people in Luang Prabang Capital; examine the factors that relate to the capability in producing and developing products for acceptance of ODOP of local people in Luang Prabang Capital; and analyze the trends in producing and developing products for acceptance of ODOP of local people in Luang Prabang Capital. The result of this study will be useful for many sectors such as producers in terms of production and development, for policy makers in terms of supporting production and development products in ODOP campaign concept in Luang Prangbang as well as in Lao PDR. The result shows that the local people have high capability level in producing and developing products for ODOP registration whose products are hand-made focused, unique, and reflect Lao traditional characteristics, especially the Luang Prabang people. The products are made of raw materials from nature and are designed by local wisdom which traditional pattern is adapted to match the contemporary trend and to qualify the ODOP requirement of Lao PDR. The result of the hypothetical test shows that factors of production, product value, returns, ODOP recognition by the people, and production experience have positive relations with the capability of producing and developing products for ODOP registration of local people in Luang Prabang with significance value of 0.05. In terms of the trend in producing and developing products for ODOP requirements, it tends to increase by 87.8%. They are to focus on the products' uniqueness and on the customers' preferences. They also concentrate on product images and branding, product development and packaging.

**Keywords:** *capability, producing, one district one product*

## 1. ພາກສະເໜີ

ນະໂຍບາຍ ໜຶ່ງເມືອງໜຶ່ງຜະລິດຕະພັນແຫ່ງຊາດ ແມ່ນຕິດພັນກັບວຽກງານບູລິມະສິດ ຂອງລັດຖະບານ ສົ່ງເສີມຜະລິດເປັນສິນຄ້າ ທີ່ເປັນເອກະລັກຂອງທ້ອງຖິ່ນ ບ້ານ ແລະ ກຸ່ມຜະລິດ, ການຜະລິດທີ່ນຳໃຊ້ພູມປັນຍາທ້ອງຖິ່ນ, ນຳໃຊ້ວັດຖຸດິບພາຍໃນທ້ອງຖິ່ນນັ້ນໆ ໃຫ້ເກີດປະໂຫຍດສູງສຸດ. ນອກຈາກນີ້, ວຽກງານດັ່ງກ່າວ ແມ່ນໄດ້ຕິດພັນກັບວຽກງານ 3 ສ້າງທີ່ສູນການເມືອງສູນກາງພັກວາງອອກ ເຊິ່ງເປົ້າໝາຍຫຼັກຂອງການຈັດຕັ້ງປະຕິບັດວຽກງານ ໂອດອບແຫ່ງຊາດ ແມ່ນເພື່ອເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນ

ດີຂຶ້ນ, ມີລາຍຮັບເພີ່ມຂຶ້ນ ແລະ ສ້າງວຽກເຮັດງານທຳ ເຊິ່ງຜ່ານການລົງປະເມີນທົ່ວປະເທດເຫັນວ່າ: ໃນຂະແໜງການຜະລິດສິນຄ້າໂອດອບແມ່ນໄດ້ນຳໃຊ້ແຮງງານເພດຍິງເຂົ້າໃນ ການຜະລິດເປັນສ່ວນຫຼາຍ; ປະຊາຊົນມີລາຍຮັບເພີ່ມຂຶ້ນ 10-30% ເມື່ອທຽບໃສ່ປີຜ່ານມາຜົນຂອງການສຳຫຼວດຍັງຊີ້ໃຫ້ເຫັນວ່າ: ການຜະລິດມີທ່າອຽງເພີ່ມຂຶ້ນເຮັດໃຫ້ປະຊາຊົນໃນທ້ອງຖິ່ນມີວຽກເຮັດງານທຳ, ມີລາຍຮັບເພີ່ມຂຶ້ນ ແລະ ມີຄວາມກະຕືລືລົ້ນໃນການຜະລິດແລະພັດທະນາສິນຄ້າຂອງຕົນ (Deema, 2021).

ແຂວງຫຼວງພະບາງ ເປັນແຂວງທີ່ມີປະຫວັດຄວາມເປັນມາຍາວນານ, ມີສິນຄ້າທີ່ເປັນເອກະລັກທີ່ຫຼາກຫຼາຍແຕ່ສິນຄ້າທີ່ໄດ້ຮັບອານຸຍາດສິນຄ້າໂອດອບແຫ່ງຊາດ ແມ່ນສິນຄ້າຫັດຖະກຳ ເຊິ່ງປະເພດອາຫານ ແລະ ເຄື່ອງດື່ມແມ່ນມີຄວາມຫຍຸ້ງຍາກໃນຂອດການປະສານງານກັບຂະແໜງສາທາລະນະສຸກເຮັດໃຫ້ປະເພດອາຫານ ແລະ ເຄື່ອງດື່ມຍັງບໍ່ໄດ້ຮັບອານຸຍາດ.  ອາຫານທີ່ໂດດເດັ່ນ ແລະ ເປັນທີ່ຍອມຮັບຂອງ ແຂວງຫຼວງພະບາງ ເຊັ່ນ ແຈ່ວບອງ, ໄຄແຜ່ນ, ເຂົ້າຫນົມພື້ນເມືອງຕຳຫລັບຊາວວັງ ແລະ ເຂົ້າຊອຍ. ຄວນໃຫ້ການຊຸກຍູ້ ຈາກຂະແຫນງສາທາລະນະສຸກ ແບບມີເງື່ອນໄຂທີ່ຈຳກັດ ເພື່ອສົ່ງເສີມໃຫ້ການຜະລິດຂອງຊາວບ້ານ ສາມາດແກ້ໄຂຄວາມທຸກຍາກໄດ້ ແລະ ສ້າງຂະບວນການ ອາຫານຂອງແຂວງ ໃຫ້ເປັນເອກະລັກທີ່ນັກທ່ອງທ່ຽວມາທ່ຽວຫຼວງພະບາງ ຕ້ອງໄດ້ກິນອາຫານປະເພດດັ່ງກ່າວ. ເຊິ່ງໃນປັດຈຸ ບັນຜະລິດຕະພັນຕາມທ້ອງຖິ່ນທີ່ມາຈາກພູມປັນຍາຂອງປະຊາຊົນ ໄດ້ຮັບຄວາມສົນໃຈ ແລະ ເປັນທີ່ນິຍົມຂອງຜູ້ບໍລິໂພກທັງພາຍໃນ ແລະ ຕ່າງປະເທດ ຈຶ່ງເຮັດໃຫ້ປະຊາຊົນ ແລະ ຜູ້ປະກອບທ້ອງຖິ່ນຫຼາຍຄົນເຂົ້າມາແຂ່ງຂັນກັນໃນຕະຫຼາດຫຼາຍຂຶ້ນ ໂດຍຈະມຸ່ງເນັ້ນໄປໃນທິດທາງຂອງການພັດທະນາຜະລິດຕະພັນຂອງແຕ່ລະທ້ອງຖິ່ນໃຫ້ມີຄຸນະພາບ ແລະ ສາມາດຕອບໂຈດຄວາມຕ້ອງການຂອງຜູ້ບໍລິໂພກໃນທິດທາງທີ່ດີຂຶ້ນ. ໃນຂະນະດຽວກັນກໍ່ອາດມີປະຊົນ ແລະ ຜູ້ປະກອບການບາງຄົນທີ່ຍັງເບິ່ງບໍ່ເຫັນເຖິງຄວາມສຳຄັນຂອງຜະລິດຕະພັນທີ່ ສົ່ງຜົນຕໍ່ຄຸນະພາບຂອງຜະລິດຕະພັນ ພ້ອມທັງຍັງບໍ່ສາມາດດຶງດູດຄວາມສົນໃຈຈາກຜູ້ບໍລິໂພກໄດ້ເທົ່າທີ່ຄວນ. ດັ່ງນັ້ນ ຜູ້ປະກອບການຜະລິດ ຈຶ່ງຕ້ອງຫັນມາໃຫ້ຄວາມສຳຄັນໃນການພັດທະນາຜະລິດຕະພັນໃຫ້ສາມາດຄຸ້ມຄອງ ແລະ ປ້ອງກັນບໍ່ໃຫ້ສິນຄ້າ ຫຼື ຜະລິດຕະພັນເສຍຫາຍ ແລະ ເພີ່ມຄຸນຄ່າຕໍ່ຜູ້ບໍລິໂພກ. ການພັດທະນາຜະລິດຕະພັນຖືວ່າເປັນສິ່ງທີ່ມີຄວາມສຳຄັນຫຼາຍ ເພາະວ່າການທີ່ມີຜະລິດຕະພັນທີ່ດີ ແລະ ມີຄຸນະພາບສາມາດຊ່ວຍສົ່ງເສີມພາບຫຼັກຂອງຜະລິດຕະພັນ ລວມໄປຈົນເຖິງທ້ອງຖິ່ນອີກດ້ວຍ. ໃນເລື່ອງຂອງຜະລິດຕະພັນ ຫຼື ສິນຄ້າຊຸມຊົນ ເຊິ່ງບັນຫາໜຶ່ງທີ່ພົບເຫັນໃນເກືອບທຸກຊຸມຊົນ ພົບວ່າຍັງມີບັນຫາທາງດ້ານຂອງຮູບແບບຜະລິດຕະພັນທີ່ຍັງບໍ່ເປັນທີ່ຕ້ອງການຂອງຜູ້ບໍລິໂພກ, ການອອກແບບຜະລິດຕະພັນຈຶ່ງເປັນສ່ວນທີ່ສຳຄັນຢ່າງຍິ່ງຕໍ່ການພັດທະນາຄຸນະພາບຂອງຜະລິດຕະພັນຊຸມຊົນ (Sasongkoah, 2012) ແລະ ໃນການວິໄຈຈະເນັ້ນໃນເລື່ອງຂອງການພັດທະນາຜະລິດຕະພັນຂອງຜະລິດຕະພັນຊຸມຊົນເພື່ອການພັດທະນາທີ່ຍັ້ງຢືນ. ຈາກຜົນງານການວິໄຈດັ່ງກ່າວໄດ້ຍົກໃຫ້ເຫັນວ່າ ການສ້າງຜະລິດຕະພັນຊຸມຊົນຄວນມີການອອກແບບໃຫ້ສອດຄ່ອງກັບຄວາມຕ້ອງການຂອງຕະຫຼາດ ຫຼື ຄ່ານິຍົມໃນຂະນະນັ້ນ ໂດຍໃຊ້ວັດຖຸດິບຈາກທ້ອງຖິ່ນຢ່າງຄຸ້ມຄ່າ, ຄວາມງົດງາມ, ເອກະລັກທີ່ກໍ່ໃຫ້ເກີດຄຸນຄ່າທາງຄວາມຮູ້ສຶກ ແລະ ຄຸນຄ່າທາງຈິດໃຈແກ່ຜູ້ບໍລິໂພກ.

ການສຶກສາຄົ້ນຄວ້າໃນເລື່ອງ “ສັກກະຍະພາບໃນການຜະລິດ ແລະ ການພັດທະນາສິນຄ້າເພື່ອສ້າງເປັນສິນຄ້າ ODOP ຂອງປະຊາຊົນໃນນະຄອນຫຼວງພະບາງ” ຈະເປັນການສຶກສາລາຍລະອຽດກ່ຽວກັບ ການສົ່ງເສີມການ ຫຼື ຈັດສັນຊັບພະຍາກອນທີ່ມີຢູ່ໃນທ້ອງຖິ່ນໃຫ້ກາຍເປັນສິນຄ້າທີ່ມີຄຸນະພາບ, ມີຈຸດເດັ່ນ, ເປັນເອກະລັກຂອງຕົນ, ສອດຄ່ອງກັບວັດທະນະທຳຂອງແຕ່ລະທ້ອງຖິ່ນ ເຊິ່ງຖືເປັນການສືບທອດ ແລະ ພັດທະນາພູມປັນຍາດັ້ງເດີມ ແລ້ວຕໍ່ຍອດດ້ວຍວິທະຍາການສະໄໝໃໝ່ ເຮັດໃຫ້ສາມາດຈຳໜ່າຍໄດ້ທັງຕະຫຼາດພາຍໃນ ແລະ ຕ່າງປະເທດ. ນອກຈາກນີ້ ໂຄງການສົ່ງເສີມການຜະລິດສິນຄ້າ ODOP ຍັງເປັນໜຶ່ງໃນນະໂຍບາຍສຳຄັນຂອງລັດຖະບານໃນປັດຈຸບັນ ໂດຍມີເປົ້າໝາຍເນັ້ນໃຫ້ແຕ່ລະທ້ອງຖິ່ນໄດ້ນຳພູມປັນຍາທ້ອງຖິ່ນມາໃຊ້ໃນການພັດທະນາສິນຄ້າ ໂດຍພາກລັດເຂົ້າມາຊ່ວຍທາງດ້ານຄວາມຮູ້ສະໄໝໃໝ່ ແລະ ການບໍລິຫານຈັດການ ເພື່ອ

ເຊື່ອມໂຍງສິນຄ້າຈາກທ້ອງຖິ່ນສູ່ຕະຫຼາດພາຍໃນ ແລະ ຕ່າງປະເທດ ດ້ວຍລະບົບຮ້ານຄ້າເຄືອຂ່າຍ ແລະ ອິນເຕີເນັດ ເພື່ອສົ່ງເສີມ ແລະ ສະໜັບສະໜູນຂະບວນການພັດທະນາທ້ອງຖິ່ນ, ສ້າງຊຸມຊົນທີ່ເຂັ້ມແຂງເພິ່ງພາຕົນເອງໄດ້, ໃຫ້ປະຊາຊົນມີສ່ວນຮ່ວມໃນການສ້າງວຽກເຮັດງານທຳ, ສ້າງລາຍໄດ້ດ້ວຍການນຳພູມປັນຍາທ້ອງຖິ່ນມາພັດທະນາເປັນຜະລິດຕະພັນ ແລະ ບໍລິການທີ່ມີຄຸນະພາບ, ມີຈຸດເດັ່ນ ແລະ ມີມູນຄ່າເພີ່ມ, ສອດຄ່ອງກັບວັດທະນະທຳ ແລະ ວິຖີຊີວິດທ້ອງຖິ່ນ. ແຕ່ເນື່ອງຈາກວ່າໃນປັດຈຸບັນ ຜະລິດຕະພັນ ຫຼື ສິນຄ້າ ODOP ຫຼາຍຢ່າງຍັງປະສົບບັນຫາໃນຮູບແບບຂອງຜະລິດຕະພັນ ເນື່ອຈາກຜູ້ຜະລິດຍັງຂາດປະສົບການໃນການອອກແບບຜະລິດຕະພັນ ແລະ ຄວາມຄິດສ້າງສັນມາພັດທະນາ, ດ້ານການຂົນສົ່ງ, ດ້ານການຕະຫຼາດ ເຊິ່ງຜູ້ປະກອບການໃນຊຸມຊົນຕ່າງໆຄວນໃຫ້ຄວາມສຳຄັນ ເພາະການສົ່ງເສີມການຕະຫຼາດໃນຮູບແບບຂອງຜະລິດຕະພັນເພື່ອສ້າງເອກະລັກໃຫ້ກັບຜະລິດຕະພັນເປັນທີ່ສົນໃຈ ແລະ ເປັນໜຶ່ງໃນປັດໄຈສຳຄັນໃນການດຳເນີນທຸລະກິດ ເພື່ອບັນລຸຈຸດມຸ່ງ ໝາຍຂອງອົງກອນ ຫຼື ຄອບຄົວຢ່າງແທ້ຈິງ, ສ້າງຄວາມໜ້າສົນໃຈໃນຕົວສິນຄ້າ ແລະ ສາມາດສ້າງຜົນສຳເລັດໄດ້ໃນອະ ນາຄົດ ເພື່ອກ້າວໄປສູ່ຕະຫຼາດຜະລິດຕະພັນທີ່ຫຼາກຫຼາຍ ເຊິ່ງເປັນຍຸດທະສາດຢ່າງໜຶ່ງທີ່ຈະຊ່ວຍສ້າງມູນຄ່າເພີ່ມ ແລະ ແຮງຈູງໃຈໃຫ້ຜູ້ບໍລິໂພກຊື້ສິນຄ້າ ແລະ ຈາກການສຶກສາຂໍ້ມູນກ່ຽວກັບການຜະລິດສິນຄ້າຊຸມຊົນ ຫຼື ສິນຄ້າ ODOP ໃນແຂວງຫຼວງພະບາງໃນປັດຈຸບັນນັ້ນແມ່ນມີສັກກາຍຍະພາບ ແລະ ຄວາມເປັນໄປໄດ້ໃນດ້ານຫຼັກການໃນການດຳເນີນທຸລະກິດຂະໜາດນ້ອຍໃນຮູບແບບຂອງທຸລະກິດຫັດຖະກຳ ແລະ ການກະເສດ ເນື່ອງຈາກສ່ວນໃຫຍ່ປະຊາຊົນສ່ວນໃຫຍ່ມີອາຊີບຫັດຖະກຳ ແລະ ຊາວກະສິກອນ; ມີຊັບພະຍາກອນ ແລະ ພູມປັນຍາທ້ອງຖິ່ນທີ່ເປັນໜ້າສົນໃຈ ພຽງແຕ່ຍັງຂາດການສະໜັບສະໜູນ ແລະ ແນວທາງການບໍລິຫານຈັດການທີ່ມີປະສິດທິພາບ (Duangklang, 2016).

ຈາກເຫດຜົນທີ່ກ່າວມາຂ້າງຕົ້ນ ກຸ່ມຜູ້ວິໄຈຈຶ່ງມີຄວາມສົນໃຈສຶກສາໃນປະເດັນສັກກະຍະພາບໃນການຜະລິດ ແລະ ການພັດທະນາສິນຄ້າເພື່ອສ້າງເປັນສິນຄ້າ ODOP ຂອງປະຊາຊົນໃນນະຄອນຫຼວງພະບາງ ເພື່ອເພີ່ມປະສິດທິພາບທາງການຈັດການຊຸມຊົນແບບຍືນຍົງ ໂດຍເລືອກເອົາປະຊາຊົນຜູ້ທີ່ປະກອບກິດຈະການຜະລິດກ່ຽວກັບຜະລິດຕະພັນຫັດຖະກຳ ແລະ ຜະລິດຕະພັນອາຫານ ມາເປັນກໍລະນີສຶກສາ ເນື່ອງຈາກວ່າ ຫຼວງພະບາງ ເປັນສະຖານທີ່ ທີ່ມີຊື່ສຽງທາງດ້ານວັດທະນະທຳ ແລະ ການຜະລິດສິນຄ້າຫັດຖະກຳ ທີ່ສາມາດນຳໄປສ້າງມູນຄ່າເພີ່ມໃນຮູບແບບຜະລິດຕະພັນຊຸມຊົນ ຫຼື ສິນຄ້າ ODOP ທີ່ສາມາດຕໍ່ຍອດໄປເຖິງການສ້າງລາຍໄດ້ໃນຮູບແບບອື່ນໆພາຍໃນຊຸມຊົນ. ນອກເໜືອຈາກປະໂຫຍດທີ່ໄດ້ຈາກມູນຄ່າເພີ່ມຂອງຜະລິດຕະພັນແລ້ວ ຍັງຖືເປັນການຍົກລະດັບມາດຕະຖານຂອງຜະລິດຕະພັນ ຫຼື ສິນຄ້າໂດຍມຸ່ງຫວັງໃຫ້ປະຊາຊົນໃນຊຸມຊົນຊ່ວຍກັນສ້າງໃຫ້ເກີດມາດຕະຖານສຳລັບຜະລິດຕະພັນໃນຊຸມຊົນຂອງຕົນໃຫ້ເປັນທີ່ຍອມຮັບຂອງຜູ້ບໍລິໂພກ ຫຼື ນັກທ່ອງທ່ຽວ ເພື່ອກໍ່ໃຫ້ເກີດການສ້າງກະແສນິຍົມໃນການຊົມໃຊ້ສິນຄ້າພາຍໃນ ເຊິ່ງຖືວ່າເປັນການອະນຸລັກພູມປັນຍາທ້ອງຖິ່ນຄວບຄູ່ກັບການອານຸລັກສິ່ງແວດລ້ອມ; ນຳລາຍໄດ້ມາສູ່ຄົນໃນຊຸມຊົນ ເປັນການຊ່ວຍແບ່ງເບົາບັນຫາຄວາມຍາກຈົນ ແລະ ກໍ່ໃຫ້ເກີດຄວາມເຂັ້ມແຂງ ແລະ ສົ່ງເສີມການພັດທະນາທ້ອງຖິ່ນແບບຍືນຍົງ.

ເພື່ອເປັນການເຮັດໃຫ້ການດຳເນີນການຄົ້ນຄວ້າວິໄຈຄັ້ງນີ້ ເປັນໄປຕາມເປົ້າໝາຍ ແລະ ສະດວກຕໍ່ການຄົ້ນຄວ້າວິໄຈ ກຸ່ມຜູ້ວິໄຈໄດ້ມີຈຸດປະສົງຂອງການຄົ້ນຄວ້າວິໄຈຄືດັ່ງນີ້:

1) ສຶກສາສັກກະຍະພາບໃນການຜະລິດ ແລະ ການພັດທະນາຜະລິດຕະພັນ ຫຼື ສິນຄ້າ ເພື່ອສ້າງເປັນຜະລິດຕະພັນ ຫຼື ສິນຄ້າ ODOP ຂອງປະຊາຊົນໃນນະຄອນຫຼວງພະບາງ, 2) ວິເຄາະປັດໄຈທີ່ມີຄວາມສຳພັນຕໍ່ສັກກະຍະພາບໃນການຜະລິດ ແລະ ພັດທະນາສິນຄ້າເພື່ອສ້າງເປັນສິນຄ້າ ODOP ຂອງປະຊາຊົນໃນ ນະຄອນຫຼວງພະບາງ ແລະ 3) ວິເຄາະທ່າອ່ຽງໃນການຜະລິດ ແລະ ພັດທະນາຜະລິດຕະພັນເພື່ອສ້າງເປັນສິນຄ້າ ODOP ຂອງປະຊາຊົນໃນ ນະຄອນຫຼວງພະບາງ.

## 2. ອຸປະກອນ ແລະ ວິທີການ

ເຄື່ອງມືທີ່ໃຊ້ໃນການທີ່ໃຊ້ໃນການວິໄຈຄື: ການຄົ້ນຄວ້າວິໄຈໃນຄັ້ງນີ້ ເປັນການຄົ້ນຄວ້າວິໄຈໃນລັກສະນະ

ການສຳຫຼວດ (Survey research) ເຊິ່ງຈະມີທັງການໃຊ້ແບບສອບຖາມ (Questionnaires) ແລະ ແບບສຳພາດ (Interview) ທີ່ທີມງານຄົ້ນຄວ້າວິໄຈໄດ້ສ້າງຂຶ້ນມາເພື່ອເປັນເຄື່ອງມືໃນການເກັບກຳ ແລະ ລວບລວມຂໍ້ມູນຈາກກຸ່ມຕົວຢ່າງ ເພື່ອສຶກສາສັກກະຍະພາບໃນການຜະລິດ ແລະ ການພັດທະນາຜະລິດຕະພັນ, ປັດໄຈທີ່ມີຜົນຕໍ່ການຜະລິດ ແລະ ພັດທະນາຜະລິດຕະພັນເພື່ອສ້າງເປັນສິນຄ້າ ODOP ໃນນະຄອນຫຼວງພະບາງ. ການອະທິບາຍຜົນຂອງການສຶກສາໃນຄັ້ງນີ້ ແມ່ນນຳໃຊ້ຮູບແບບການພັນລະນາດ້ວຍການນຳສະເໜີຄ່າຕົວເລກ; ລວມໄປເຖິງບັນດາທິດສະດີທີ່ກ່ຽວຂ້ອງອື່ນໆ ເພື່ອປະກອບເຂົ້າໃນການອະທິບາຍເຫດ ແລະ ຜົນຂອງການສຶກສາ.

### 2.1 ການເກັບລວມລວມຂໍ້ມູນ

ກຸ່ມຜູ້ຄົ້ນຄວ້າວິໄຈໄດ້ມີການລົງເກັບຂໍ້ມູນໂດຍການແຈກຢາຍແບບສອບຖາມ, ການສັງເກດການ, ແລະ ສຳພາດກຸ່ມເປົ້າໝາຍ ເຊິ່ງແມ່ນຜູ້ຜະລິດສິນຄ້າຕົວຈິງ, ໂດຍຜ່ານເຄື່ອງມືທີ່ໃຊ້ໃນການເກັບຂໍ້ມູນ (ແບບສອບຖາມ , ແບບສຳພາດ ແລະ ຖ່າຍພາບປະກອບ).

### 2.2 ການວິເຄາະຂໍ້ມູນ

ການສຶກສາສັກກະຍະພາບໃນການຜະລິດ ແລະ ການພັດທະນາສິນຄ້າເພື່ອສ້າງເປັນສິນຄ້າ ODOP ຂອງປະຊາຊົນໃນນະຄອນຫຼວງພະບາງ ໂດຍການໃຊ້ສູດຄິດໄລ່ຄ່າເປີເຊັນ, ຄ່າສະເລ່ຍ ມາອະທິບາຍ ແລະ ພັນລະນາຊີ້ແຈ້ງເຫດຜົນຕາມຄວາມເປັນຈິງຂອງຂໍ້ມູນທີ່ໄດ້ມາ; ການສຶກສາປັດໄຈທີ່ມີຄວາມສຳພັນກັບຄວາມສາມາດໃນການຜະລິດ ແລະ ການພັດທະນາສິນຄ້າເພື່ອສ້າງເປັນສິນຄ້າ ODOP ຂອງປະຊາຊົນໃນນະຄອນຫຼວງພະບາງ ແມ່ນຈະໄດ້ວິເຄາະເຖິງບັນດາປັດໄຈຕ່າງໆທີ່ມີຄວາມສຳພັນ ແລະ ສິ່ງຜົນຕໍ່ຄວາມສາມາດໃນການຜະລິດ ແລະ ການພັດທະນາສິນຄ້າເພື່ອສ້າງເປັນສິນຄ້າ ODOP ຂອງປະຊາຊົນໃນນະຄອນຫຼວງພະບາງ ວ່າຂຶ້ນຢູ່ກັບປັດໄຈໃດເປັນຫຼັກ ໂດຍການໃຊ້ວິທີການວິເຄາະຄວາມສຳພັນແບບ (Chi-Square) ແລະ ແມ່ນໄດ້ນຳໃຊ້ດ້ວຍວິທີການຄາດປະມານແບບວິທີກຳລັງສອງນ້ອຍສຸດ (Ordinary Least Squares: OLS) ດ້ວຍລະດັບຄວາມເຊື່ອໝັ້ນ 90%, 95% ແລະ 99% ໂດຍການວິເຄາະຜ່ານໂປຼແກມວິເຄາະຂໍ້ມູນທາງສະຖິຕິ (SPSS Version 21) ໂດຍກຳນົດຄ່າລະດັບຄວາມສຳຄັນທາງດ້ານສະຖິຕິຄື $*_{sig \le 0.1}$ $**_{sig \le 0.05}$ $***_{sig \le 0.01}$. ສ່ວນສຳລັບການສຶກສາທ່າອ່ຽງໃນການຜະລິດ ແລະ ການພັດທະນາ ຄວາມຄິດເຫັນ ແລະ ແນວທາງການແນະນຳຂອງນັກທ່ອງທ່ຽວຕ່າງປະເທດຕໍ່ກັບສິນຄ້າໃນ ນະຄອນຫຼວງພະບາງ ສິນຄ້າເພື່ອສ້າງເປັນສິນຄ້າ ODOP ຂອງປະຊາຊົນໃນ ນະຄອນຫຼວງພະບາງ ຈະເປັນການສຶກສາດ້ານຄວາມຄິດເຫັນໃນການຜະລິດ, ດ້ານການຕອບສະໜອງ ແລະ ດ້ານພູມປັນຍາໂດຍການໃຊ້ວິທີການວິເຄາະຄ່າສະເລ່ຍ.

ແບບຈຳລອງທີ່ໃຊ້ໃນການວິເຄາະຂໍ້ມູນ: $LPC = f(FA, FB, FC, FD, LA, EX, ED)$

$$LPC = \beta_0 + \beta_1 FA + \beta_2 FB + \beta_3 FC + \beta_4 FD + \beta_5 LA + \beta_6 EX + \beta_7 ED + \varepsilon_t \text{................(1)}$$

ໃນແບບຈຳລອງສະແດງເຖິງການພົວພັນລະຫວ່າງປັດໄຈມີຄວາມສຳພັນຕໍ່ລະດັບສັກກະຍະພາບໃນການຜະລິດສິນຄ້າເພື່ອສ້າງເປັນສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນຂອງປະຊາຊົນໃນ ນະຄອນຫຼວງພະບາງ. ສະແດງໃນຕາຕະລາງທີ

## 3. ຜົນໄດ້ຮັບ

ໃນການວິເຄາະຄວາມພ້ອມ ແລະ ຄວາມສາມາດໃນການຜະລິດ ແລະ ການພັດທະນາຜະລິດຕະພັນເພື່ອສ້າງເປັນສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນຂອງປະຊາຊົນ ນະຄອນຫຼວງພະບາງ ພົບວ່າ ຜູ້ຜະລິດມີຄວາມພ້ອມໃນການຜະລິດ ແລະ ການພັດທະນາຜະລິດຕະພັນເພື່ອສ້າງເປັນສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ 3.84; ເຊິ່ງພິຈາລະນາເປັນແຕ່ລະປະເດັນແລ້ວພົບວ່າ ຜູ້ຜະລິດຄວາມຊຳນານໃນການຜະລິດ ຫຼາຍກວ່າໝູ່ດ້ວຍຄ່າສະເລ່ຍເທົ່າກັບ 4.11 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 0.950; ຮອງລົງມາແມ່ນຄວາມພ້ອມດ້ານວັດຖຸດິບທີ່ໃຊ້ໃນການຜະລິດ ມີຄ່າສະເລ່ຍເທົ່າກັບ 4.09 ແລະ ຄ່າຜັນປ່ຽນມາດຖານເທົ່າກັບ 0.856; ຖັດລົງມາແມ່ນຄວາມພ້ອມດ້ານຮູບແບບ ຫຼື ວິທີການຜະລິດ ແລະ ຜະລິດຕະພັນມີຄວາມເປັນເອກະລັກສະເພາະຂອງທ້ອງຖິ່ນ ເຊິ່ງມີຄ່າສະເລ່ຍເທົ່າກັບ 3.92 ຕາມລຳດັບ. ສ່ວນຄວາມພ້ອມດ້ານເຄື່ອງຈັກ ແລະ ອຸປະກອນໃນການຜະລິດ ແມ່ນມີຄ່າສະເລ່ຍຕ່ຳທີ່ສຸດຄື 3.54. ສຳລັບດ້ານຄວາມສາມາດຄວາມ

ສາມາດໃນການຜະລິດ ແລະ ການພັດທະນາຜະລິດຕະພັນເພື່ອສ້າງເປັນສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນຂອງປະຊາຊົນ ນະຄອນຫຼວງພະບາງ ພົບວ່າ ຜູ້ຜະລິດມີຄວາມສາມາດໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍເທົ່າກັບ 3.98; ເຊິ່ງໃນນັ້ນຄວາມສາມາດໃນການສ້າງຜະລິດຕະພັນໃຫ້ມີຄວາມເປັນເອກະລັກທ້ອງຖິ່ນ ແລະ ການກຳນົດລາຄາຂອງຜະລິດຕະພັນມີຄວາມເໝາະສົມກັບຄຸນະພາບຂອງສິນຄ້າ ມີຄ່າສະເລ່ຍສູງສຸດຄື 4.08; ຮອງລົງມາແມ່ນ ສາມາດສ້າງຄຸນະພາບຂອງຜະລິດຕະພັນໃຫ້ໄດ້ຕາມມາດຕະຖານຕາມເງື່ອນໄຂຂອງຜະລິດຕະພັນ ຫຼື ສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນ ມີຄ່າສະເລ່ຍເທົ່າກັບ 3.98 ແລະ ຄວາມສາມາດຜະລິດ ແລະ ຕອບສະໜອງໄດ້ຢ່າງພຽງພໍ ມີຄ່າສະເລ່ຍເທົ່າກັບ 3.78 ຕາມລຳດັບ.

ຜົນການວິເຄາະປັດໄຈທີ່ມີຄວາມສຳພັນກັບສັກກະຍະພາບໃນດ້ານການຜະລິດ ແລະ ການພັດທະນາຜະລິດຕະພັນ ເພື່ອສ້າງເປັນສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນໃນນະຄອນຫຼວງພະບາງ ພົບວ່າ ຄ່າສະຖິຕິທົດສອບບັນຫາຄວາມສຳພັນກັນເອງຂອງຕົວປ່ຽນ (Multicollinearity) ດ້ວຍວິທີ Durbin-Watson Statistic ພົບວ່າຄ່າ Durbin-Watson = 1.929 ເຊິ່ງມີຄ່າຢູ່ລະຫວ່າງເກນ 1.5-2.5 (ເຂົ້າໃກ້ 2) ສະແດງວ່າຄວາມຄາດເຄື່ອນແຕ່ລະຄ່າມີຄວາມເປັນອິດສະຫຼະຕໍ່ກັນ ຫຼື ບໍ່ມີຄວາມສຳພັນກັນເອງຂອງຕົວຄາດເຄື່ອນ ຈຶ່ງບໍ່ເຮັດໃຫ້ເກີດບັນຫາ Autocorrelation ແລະ ຜ່ານການທົດສອບຄ່າສະຖິຕິທົດສອບ ANOVA ຫຼື ການທົດສອບຄວາມແປປວນຂອງຕົວປ່ຽນ (F = 104.96) ແລະ ມີລະດັບຄວາມສຳຄັນທາງສະຖິຕິ (Sig = 0.00) ສະແດງວ່າແບບຈຳລອງປັດໄຈທີ່ຄວາມສຳພັນຕໍ່ລະດັບສັກກາຍຍະພາບໃນການຜະລິດສິນຄ້າເພື່ອສ້າງເປັນສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນຂອງປະຊາຊົນໃນ ນະຄອນຫຼວງພະບາງ ແມ່ນສາມາດນຳໃຊ້ໄດ້ ແລະ ຂຶ້ນຢູ່ກັບປັດໄຈທີ່ກຳນົດມາຢ່າງໜ້ອຍ 1 ປັດໄຈ. ເຊິ່ງຜ່ານການກວດສອບຄຸນສົມບັດຂອງແບບຈຳລອງພົບວ່າ ຄ່າສຳປະສິດການຕັດສິນໃຈ R Square = 0.741 ເຊິ່ງໝາຍຄວາມວ່າ ລະດັບຄວາມພ້ອມ ແລະ ຄວາມສາມາດໃນການຜະລິດ ຫຼື ແປຮູບຜະລິດຕະພັນເພື່ອສ້າງເປັນສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນຂອງປະຊາຊົນໃນ ນະຄອນຫຼວງພະບາງ ສາມາດອະທິບາຍດ້ວຍຕົວປ່ຽນອິດສະຫຼະທີ່ກຳນົດຂຶ້ນມາໃນລະດັບ 74.1%, ສ່ວນທີ່ເຫຼືອແມ່ນຂຶ້ນຢູ່ກັບປັດໄຈອື່ນໆທີ່ບໍ່ໄດ້ນຳເຂົ້າມາສຶກສາ. ເຊິ່ງຜ່ານການກວດສອບຄຸນສົມບັດຂອງແບບຈຳລອງຄວາມສຳພັນລະຫວ່າງລະດັບຄວາມສາມາດໃນການຜະລິດຂອງຜູ້ຜະລິດກັບປັດໄຈຕ່າງໆ 7 ປັດໄຈ ສາມາດສະຫຼຸບໄດ້ວ່າ ມີພຽງ 5 ປັດໄຈຄື: ປັດໄຈດ້ານປັດໄຈການຜະລິດ (FA), ໄຈດ້ານຄຸນຄ່າຜະລິດຕະພັນ (FB), ໄຈດ້ານຜົນໄດ້ຮັບ (FD), ປັດໄຈດ້ານການຮັບຮູ້ຂໍ້ມູນກ່ຽວກັບສິນຄ້າ ODOP (LA), ປັດໄຈດ້ານປະສົບການໃນການຜະລິດ (EX) ເທົ່ານັ້ນທີ່ມີຄວາມສຳຄັນທາງສະຖິຕິ; ສ່ວນໄຈດ້ານການສະໜັບສະໜູນຈາກພາກສ່ວນທີ່ກ່ຽວຂ້ອງ (FC) ແລະ ປັດໄຈດ້ານລະດັບການສຶກສາ (ED) ແມ່ນບໍ່ມີຄວາມສຳຄັນທາງສະຖິຕິເຊິ່ງສາມາດນຳມາສ້າງແບບຈຳລອງທາງດ້ານເສດຖາມິຕິໄດ້ດັ່ງນີ້:

$$LPC = 0.346 + 0.304\ FA + 0.215\ F + 0.207\ FD + 0.17\ LA + 0.006\ EX$$

ຈາກແບບຈຳລອງຂ້າງເທິງ ສາມາດອະທິບາຍຜົນຂອງການທົດສອບຄວາມແຕກຕ່າງຄ່າສະເລ່ຍຂອງຕົວປ່ຽນດ້ວຍສະຖິຕິທົດສອບ (t-test) ສາມາດອະທິບາຍຜົນໄດ້ດັ່ງນີ້:

1. ສຳລັບດ້ານປັດໄຈການຜະລິດພາຍໃນ ມີຄ່າສະຖິຕິທົດສອບ (t-test =8.164) ແລະ ມີຄ່າລະດັບຄວາມສຳຄັນທາງສະຖິຕິ (Sig = 0.000) ແລະ ມີຄ່າສຳປະສິດການຖົດຖອຍເທົ່າກັບ 0.304 ເຊິ່ງສາມາດອະທິບາຍໄດ້ວ່າ: ປັດໄຈດ້ານການຜະລິດ ມີການພົວພັນໄປໃນທິດທາງດຽວກັນກັບສັກກະຍະພາບໃນການຜະລິດ ແລະ ການພັດທະນາສິນຄ້າເພື່ອສ້າງເປັນສິນຄ້າ ODOP ຂອງປະຊາຊົນໃນນະຄອນຫຼວງພະບາງ ນັ້ນຄື: ເມື່ອປັດໄຈການຜະລິດເພີ່ມຂຶ້ນ (ຫຼື ຫຼຸດລົງ) 1% ໂດຍກຳນົດໃຫ້ປັດໄຈອື່ນຄົງທີ່ ຈະສົ່ງຜົນເຮັດໃຫ້ສັກກະຍະພາບໃນການຜະລິດ ແລະ ພັດທະນາສິນຄ້າເພື່ອສ້າງເປັນສິນຄ້າ ODOP ຂອງປະຊາຊົນໃນນະຄອນຫຼວງພະບາງ ເພີ່ມຂຶ້ນ (ຫຼື ຫຼຸດລົງ) 0.304% ດ້ວຍລະດັບຄວາມເຊື່ອໝັ້ນ 99%.

2. ສຳລັບປັດໄຈດ້ານຄຸນຄ່າຂອງຜະລິດຕະພັນ ມີຄ່າສະຖິຕິທົດສອບ (t-test =5.615) ແລະ ມີຄ່າລະດັບຄວາມ

ສຳຄັນທາງສະຖິຕິ (Sig = 0.000) ແລະ ມີຄ່າສຳປະສິດການຖົດຖອຍເທົ່າກັບ 0.215 ເຊິ່ງສາມາດອະທິບາຍໄດ້ວ່າ: ປັດໄຈດ້ານຄຸນຄ່າຂອງຜະລິດຕະພັນ ມີການພົວພັນໄປໃນທິດທາງດຽວກັນກັບສັກກາຍຍະພາບໃນການຜະລິດ ແລະ ການພັດທະນາສິນຄ້າເພື່ອສ້າງເປັນສິນຄ້າ ODOP ຂອງປະຊາຊົນໃນ ນະຄອນຫຼວງພະບາງ ນັ້ນຄື: ເມື່ອປະຊາຊົນເຫັນໄດ້ເຊິ່ງຄຸນຄ່າຂອງຜະລິດຕະພັນເພີ່ມຂຶ້ນ 1% ໂດຍກຳນົດໃຫ້ປັດໄຈອື່ນຄົງທີ່ ຈະສົ່ງຜົນເຮັດໃຫ້ສັກກາຍຍະພາບໃນການຜະລິດ ແລະ ພັດທະນາສິນຄ້າເພື່ອສ້າງເປັນສິນຄ້າ ODOP ປະຊາຊົນໃນ ນະຄອນຫຼວງພະບາງ ເພີ່ມຂຶ້ນ (ຫຼື ຫຼຸດລົງ) 0.215% ດ້ວຍລະດັບຄວາມເຊື່ອໝັ້ນ 99%.

3. ສຳລັບປັດໄຈດ້ານຜົນໄດ້ຮັບ ມີຄ່າສະຖິຕິທົດສອບ (t-test =5.126) ແລະ ມີຄ່າລະດັບຄວາມສຳຄັນທາງສະຖິຕິ (Sig = 0.000) ແລະ ມີຄ່າສຳປະສິດການຖົດຖອຍເທົ່າກັບ 0.207 ເຊິ່ງສາມາດອະທິບາຍໄດ້ວ່າ: ປັດໄຈດ້ານປັດໄຈດ້ານຜົນໄດ້ຮັບ ມີການພົວພັນໄປໃນທິດທາງດຽວກັນກັບສັກກະຍະພາບໃນການຜະລິດ ແລະ ການພັດທະນາສິນຄ້າເພື່ອສ້າງເປັນສິນຄ້າ ODOP ຂອງປະຊາຊົນໃນ ນະຄອນຫຼວງພະບາງ ນັ້ນຄື: ເມື່ອປະຊາຊົນມີຜົນໄດ້ຮັບຈາກການຜະລິດສິນຄ້າເພື່ອສ້າງເປັນສິນຄ້າ ODOP ເພີ່ມຂຶ້ນ (ຫຼື ຫຼຸດລົງ) 1% ໂດຍກຳນົດໃຫ້ປັດໄຈອື່ນຄົງທີ່ ຈະສົ່ງຜົນເຮັດໃຫ້ສັກກະຍະພາບໃນການຜະລິດ ແລະ ພັດທະນາສິນຄ້າເພື່ອສ້າງເປັນສິນຄ້າ ODOP ປະຊາຊົນໃນ ນະຄອນຫຼວງພະບາງ ເພີ່ມຂຶ້ນ (ຫຼື ຫຼຸດລົງ) 0.207% ດ້ວຍລະດັບຄວາມເຊື່ອໝັ້ນ 99%.

4. ສຳລັບປັດໄຈດ້ານລະດັບຄວາມຮັບຮູ້ກ່ຽວກັບສິນຄ້າ ODOP ຂອງປະຊາຊົນ ມີຄ່າສະຖິຕິທົດສອບ (t-test =4.601) ແລະ ມີຄ່າລະດັບຄວາມສຳຄັນທາງສະຖິຕິ (Sig = 0.000) ແລະ ມີຄ່າສຳປະສິດການຖົດຖອຍເທົ່າກັບ 0.171 ເຊິ່ງສາມາດອະທິບາຍໄດ້ວ່າ ປັດໄຈດ້ານລະດັບຄວາມຮັບຮູ້ກ່ຽວກັບສິນຄ້າ ODOP ຂອງປະຊາຊົນ ມີການພົວພັນໄປໃນທິດທາງດຽວກັນກັບສັກກະຍະພາບໃນການຜະລິດ ແລະ ການພັດທະນາສິນຄ້າເພື່ອສ້າງເປັນສິນຄ້າ ODOP ຂອງປະຊາຊົນໃນ ນະຄອນຫຼວງພະບາງ ນັ້ນຄື: ເມື່ອລະດັບຄວາມຮັບຮູ້ກ່ຽວກັບສິນຄ້າ ODOP ຂອງປະຊາຊົນເພີ່ມຂຶ້ນ 1 ລະດັບ ໂດຍກຳນົດໃຫ້ປັດໄຈອື່ນຄົງທີ່ ຈະສົ່ງຜົນໃຫ້ສັກກາຍຍະພາບໃນການຜະລິດ ແລະ ພັດທະນາສິນຄ້າເພື່ອສ້າງເປັນສິນຄ້າ ODOP ປະຊາຊົນໃນ ນະຄອນຫຼວງພະບາງ ເພີ່ມຂຶ້ນ (ຫຼື ຫຼຸດລົງ) 0.171% ດ້ວຍລະດັບຄວາມເຊື່ອໝັ້ນ 99%.

5. ສຳລັບປັດໄຈດ້ານປະສົບການໃນການຜະລິດ ແລະ ພັດທະນາສິນຄ້າຂອງປະຊາຊົນ ມີຄ່າສະຖິຕິທົດສອບ (t-test =2.544) ແລະ ມີຄ່າລະດັບຄວາມສຳຄັນທາງສະຖິຕິ (Sig = 0.011) ແລະ ມີຄ່າສຳປະສິດການຖົດຖອຍເທົ່າກັບ 0.006 ເຊິ່ງສາມາດອະທິບາຍໄດ້ວ່າ ປັດໄຈດ້ານປະສົບການໃນການຜະລິດ ແລະ ພັດທະນາສິນຄ້າຂອງປະຊາຊົນ ມີການພົວພັນໄປໃນທິດທາງດຽວກັນກັບສັກກາຍຍະພາບໃນການຜະລິດ ແລະ ການພັດທະນາສິນຄ້າເພື່ອສ້າງເປັນສິນຄ້າ ODOP ຂອງປະຊາຊົນໃນ ນະຄອນຫຼວງພະບາງ ນັ້ນຄື: ເມື່ອປະສົບການໃນການຜະລິດ ແລະ ພັດທະນາສິນຄ້າຂອງປະຊາຊົນ ເພີ່ມຂຶ້ນ 1 ປີ ໂດຍກຳນົດໃຫ້ປັດໄຈອື່ນຄົງທີ່ ຈະສົ່ງຜົນໃຫ້ສັກກະຍະພາບໃນການຜະລິດ ແລະ ພັດທະນາສິນຄ້າເພື່ອສ້າງເປັນສິນຄ້າ ODOP ປະຊາຊົນໃນ ນະຄອນຫຼວງພະບາງ ເພີ່ມຂຶ້ນ 0.006% ດ້ວຍລະດັບຄວາມເຊື່ອໝັ້ນ 95%.

ສຳລັບຜົນການວິເຄາະຜົນຂໍ້ມູນທ່າອ່ຽງໃນການຜະລິດສິນຄ້າໃນຕໍ່ໜ້າຂອງປະຊາຊາຊົນໃນ ນະຄອນຫຼວງພະບາງພົບວ່າ ຜູ້ຜະລິດທີ່ຈະມີການຜະລິດ ແລະ ພັດທະນາສິນຄ້າເພີ່ມຂຶ້ນ ມີເຖິງ 87.7% ເຊິ່ງໃນນັ້ນຜູ້ທີ່ຜະລິດສິນຄ້າຫັດຖະກຳເຄື່ອງປະດັບ ແລະ ຫັດຖະກຳເຄື່ອງປັ້ນດິນເຜົາແມ່ນມີທ່າອ່ຽງໃນການຜະລິດສິນຄ້າເພີ່ມຂຶ້ນໃນອັດຕາຫຼາຍກວ່າໝູ່ຄື 91.7% ແລະ 91.4%, ຮອງລົງມາແມ່ນຜູ້ທີ່ຜະລິດສິນຄ້າຫັດຖະກຳແຜ່ນແພ 87.5% ແລະ ສິນຄ້າຫັດຖະກຳປໍສາ 86.8% ຕາມລຳດັບ. ສ່ວນຜູທີ່ຜະລິດເທົ່າເດີມມີພຽງ 12.3% ເທົ່ານັ້ນ. ໃນນັ້ນດ້ານການອອກແບບຜະລິດຕະພັນ ໃນການຜະລິດສິນຄ້າເພື່ອສ້າງເປັນສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນຂອງປະຊາຊົນນັ້ນ ໂດຍສ່ວນໃຫຍ່ແມ່ນຈະເນັ້ນໃສ່ຄວາມເປັນເອກະລັກທ້ອງຖິ່ນ ເຊິ່ງມີຈຳນວນ 130 ຜູ້ຜະລິດ ຄິດເປັນ 39.4% ເຊິ່ງໃນນັ້ນຜູ້ຜະລິດຫັດຖະກຳເຄື່ອງປັ້ນດິນເຜົາ ແມ່ນຈະມີເນັ້ນໃສ່ຄວາມເປັນ

ເອກະລັກທ້ອງຖິ່ນຫຼາຍກວ່າຜູ້ຜະລິດສິນຄ້າອື່ນໆຄື 58.7% ຮອງລົງມາແມ່ນ ຜູຜະລິດຫັດຖະກຳປ່ສາ 51.7%, ຮອງລົງມາແມ່ນອອກແບບຕາມຄວາມຕ້ອງການຂອງລູກຄ້າ ຈຳນວນ 109 ຜູ້ຜະລິດ ຄິດເປັນ 33.0% ເຊິ່ງໃນນັ້ນຜູ້ຜະລິດຫັດຖະກຳເຄື່ອງປະດັບ ແມ່ນຈະມີເນັ້ນໃສ່ຄວາມຕ້ອງການຂອງລູກຄ້າເປັນຫຼັກຫຼາຍກວ່າຜູ້ຜະລິດສິນຄ້າອື່ນໆຄື 38.3% ຮອງລົງມາແມ່ນ ຜູ້ຜະລິດຫັດຖະກຳແຜ່ນແພ 31.9%, ແລະ ແບບປະສົມປະສານກັນ ຈຳນວນ 91 ຜູ້ຜະລິດ ຄິດເປັນ 27.6% ໃນນັ້ນແມ່ນຜູ້ຜະລິດຫັດຖະກຳໄມ້ປ່ອງ ກວມເອົາ 35.4% ແລະ ຫັດຖະກຳເຄື່ອງປະດັບ 35.0 % ຕາມລຳດັບ; ດ້ານພູມປັນຍາທີ່ໃຊ້ໃນການຜະລິດສິນຄ້າເພື່ອສ້າງເປັນສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນໃນຕໍ່ໜ້າສ່ວນໃຫຍ່ແມ່ນຈະມີການນຳໃຊ້ພູມປັນຍາແບບປະສົມປະສານລະຫວ່າງພູມປັນຍາທ້ອງຖິ່ນແບບດັ້ງເດີມກັບການປະຫຍຸກຕາມຍຸກສະໄໝເຂົ້າກັນ ກວມເອົາ 41.5% ເຊິ່ງໃນນັ້ນແມ່ນຜູ້ຜະລິດສິນຄ້າຫັດຖະກຳອື່ນໆ (ເຄືອປຽດ), ຫັດຖະກຳແຜ່ນແພ ແລະ ຫັດຖະກຳເຄື່ອງປະດັບ ແມ່ນກວມເອົາສັດສ່ວນຫຼາຍກວ່າໝູ່ຄື: 53.3%, 46.9% ແລະ 46.7 % ຕາມລຳດັບ, ຮອງລົງມາແມ່ນຈະມີການນຳໃຊ້ພູມປັນຍາແບບຖິ່ນແບບດັ້ງເດີມພຽງຢ່າງດຽວ ກວມເອົາ 41.2% ເຊິ່ງໃນນັ້ນແມ່ນຜູ້ຜະລິດສິນຄ້າຫັດຖະກຳເຄື່ອງປັ້ນດິນເຜົາ, ຫັດຖະກຳປ່ສາ, ຫັດຖະກຳໄມ້ປ່ອງ ແລະ ຫັດຖະກຳແຜ່ນແພ ແມ່ນກວມເອົາສັດສ່ວນຫຼາຍກວ່າໝູ່ຄື: 56.9%, 47.4%, 41.6% ແລະ 41.3% ຕາມລຳດັບ. ສ່ວນຜູ້ຜະລິດສິນຄ້າໂດຍນຳໃຊ້ວິທີການແບບທັນສະໄໝ ມີ 57 ຜູ້ຜະລິດ ຄິດເປັນ 17.3% ເທົ່ານັ້ນ. ສຳລັບການວິເຄາະທ່າອ່ຽງດ້ານຄວາມສາມາດໃນການຕອບສະໜອງສິນຄ້າຂອງປະຊາຊົນໃນນະຄອນຫຼວງພະບາງ ພົບວ່າສ່ວນໃຫຍ່ຜູ້ຜະລິດແມ່ນຈະເນັ້ນການຜະລິດສິນຄ້າຕາມຄວາມສາມາດໃນການຜະລິດຂອງຕົນເອງເປັນຫຼັກ ເຊິ່ງກວມເອົາ 50.3% ໃນນັ້ນແມ່ນຜູ້ຜະລິດຫັດຖະກຳປ່ສາ ກວມເອົາສັດສ່ວນເຖິງ 72.4%, ຫັດຖະທຳໄມ້ປ່ອງ 62.5, ຫັດຖະກຳແກະສະຫຼັກ 50.8% ແລະ ຫັດຖະກຳເຄື່ອງປັ້ນດິນເຜົາ 50% ຕາມລຳດັບ; ຮອງລົງມາແມ່ນຜູ້ຜະລິດແມ່ນຈະເນັ້ນການຜະລິດສິນຄ້າຕາມການສັ່ງຊື້ຂອງລູກຄ້າ ເຊິ່ງກວມເອົາ 47.3% ໃນນັ້ນຜູ້ຜະລິດອື່ນໆ (ເຄືອປຽດ) ກວມເອົາສັດສ່ວນເຖິງ 60.0%, ຫັດຖະກຳເຄື່ອງປະດັບ 53.3%, ຫັດຖະກຳເຄື່ອງປັ້ນດິນເຜົາ 50.0% ແລະ ຫັດຖະກຳແຜ່ນແພ 49.4% ຕາມລຳດັບ.

## 4. ວິພາກຜົນ

ຜົນການຄົ້ນຄວ້າດ້ານສັກກະຍະພາບໃນການຜະລິດ ແລະ ພັດທະນາສິນຄ້າເພື່ອສ້າງເປັນສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນຂອງປະຊາຊົນໃນ ນະຄອນຫຼວງພະບາງ ພົບວ່າ ປະຊາຊົນຜູ້ທີ່ເຮັດການຜະລິດສິນຄ້າຫັດຖະກຳໃນນະຄອນຫຼວງພະບາງ ແມ່ນມີສັກກະຍະພາບໃນການຜະລິດ ແລະ ພັດທະນາສິນຄ້າເພື່ອສ້າງເປັນສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນໃນລະດັບສູງ ບໍ່ວ່າຈະເປັນທາງດ້ານຜະລິດຕະພັນ, ດ້ານລາຄາ, ການຈັດຈຳໜ່າຍ ແລະ ການສົ່ງເສີມການຂາຍ ໂດຍສະເພາະການຜະລິດແມ່ນໄດ້ມີການນຳໃຊ້ວັດຖຸດິບທີ່ມີພາຍໃນທ້ອງຖິ່ນເປັນຫຼັກ, ມີການອອກແບບຜະລິດຕະພັນໂດຍການນຳໃຊ້ພູມປັນຍາທ້ອງຖິ່ນ ແລະ ລັກສະນະສືບທອດມາຈາກພໍ່ແມ່ ຫຼື ບັນພະບູຫຼຸດ ແລ້ວນຳມາປັບປຸງພັດທະນາໃຫ້ເປັນລວດລາຍສະເພາະໃຫ້ເຂົ້າກັບສັງຄົມປັດຈຸບັນ ປະສົມປະສານກັບຮູບແບບການຜະລິດທີ່ໃຊ້ລວດລາຍອັນເປັນເອກະລັກຕາມວັດທະນະທຳຮີດຄອງປະເພນີ ຫຼື ຕາມລັກສະນະຊົນເຜົ່າແບບດັ້ງເດີມ ເຊິ່ງມີຄວາມສອດຄ່ອງ ແລະ ເປັນໄປຕາມເງື່ອນ ຫຼື ມາດຖານຂອງສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນແຫ່ງຊາດ ໃນຂໍ້ຕົກລົງວ່າດ້ວຍໜຶ່ງເມືອງໜຶ່ງຜະລິດພັນແຫ່ງຊາດ (2017) ມາດຕາທີ 2 ທີ່ວ່າ ສິນຄ້າໜຶ່ງເມືອງຜະລິດຕະພັນ ແມ່ນຜະລິດຕະພັນທີ່ໃຊ້ສີມືແຮງງານ, ພູມປັນຍາ, ຫົວຄິດປະດິສ້າງ ແລະ ຊັບພະຍາກອນພາຍໃນທ້ອງຖິ່ນ, ມີຄວາມເປັນເອກະລັກຂອງທ້ອງຖິ່ນນັ້ນມາສ້າງເປັນຜະລິດຕະພັນ ຫຼື ສິນຄ້າ ແລະ ມາດຕາທີ 5 ວ່າດ້ວຍຫຼັກການໃນການຄັດເລືອກສິນຄ້າ ODOP ແຫ່ງຊາດທີ່ວ່າ ການດຳເນີນການຜະລິດຈະຕ້ອງໃຊ້ແຮງງານຕໍ່າກວ່າ 50 ຄົນລົງມາ, ນຳໃຊ້ວັດຖຸດິບທີ່ມີໃນທ້ອງຖິ່ນ ຫຼື ທ້ອງຖິ່ນອື່ນພາຍໃນປະເທດ ໃນການຜະລິດ ແລະ ອອກແບບມີຄວາມເປັນເອກະລັກສະເພາະທີ່ຕິດພັນກັບວັດທະນະທຳ, ຮີດຄອງປະເພນີຂອງຊາດ ແລະ ສອດຄ່ອງກັບຜົນການສຶກສາຂອງ Saithep (2017) ທີ່ສຶກສາໃນຫົວຂໍ້ ແນວທາງໃນການພັດທະນາຜະລິດຕະພັນທ້ອງຖິ່ນເພື່ອການສົ່ງອອກຂອງ

ກຸ່ມວິສາຫະກິດດອກໄມ້ປະດິດ ເຂດແມ່ທະ ເມືອງແມ່ທະ ແຂວງລຳປາງ ທີ່ວ່າສັກກະຍະພາບໃນການຜະລິດ ໂດຍສິນຄ້າທີ່ຜະລິດສ່ວນໃຫຍ່ໃຊ້ວັດຖຸດິບພາຍໃນທ້ອງຖິ່ນ ແລະ ເປັນມິດກັບສິ່ງແວລ້ອມ, ສິນຄ້າມີຮູບແບບທີ່ຫຼາກຫຼາຍກົງກັບຄວາມຕ້ອງການຂອງລູກຄ້າ ແລະ ມີການພັດທະນາຢ່າງສະໝ່ຳສະເໝີ.

ຜົນການວິເຄາະປັດໄຈທີ່ມີຄວາມສຳພັນຕໍ່ກັບຄວາມສາມາດໃນການຜະລິດ ແລະ ພັດທະນາສິນຄ້າເພື່ອສ້າງເປັນສິນຄ້າ ODOP ຂອງປະຊາຊົນໃນ ນະຄອນຫຼວງພະບາງ ດ້ວຍຄ່າ rating scale ພົບວ່າ ພາບລວມມີຄວາມສຳຄັນຢູ່ໃນລະດັບຫຼາຍ ເຊິ່ງຫາກພິຈາລະນາເປັນແຕ່ລະປັດໄຈພົບວ່າ: ປັດໄຈດ້ານການຜະລິດເຊັ່ນ: ວັດຖຸດິບ, ແຮງງານ ແລະ ເງິນທຶນໝູນວຽນທີ່ໃຊ້ໃນການຜະລິດມີພຽງພໍມີຜົນຕໍ່ການຜະລິດເພື່ອສ້າງເປັນສິນຄ້າ ODOP ໃນລະດັບຫຼາຍ ແລະ ເຊິ່ງສອດຄ່ອງກັບການສຶກສາຂອງ Waentip ແລະ Pilun (2016) ທີ່ສຶກສາປັດໄຈທີ່ສົ່ງຜົນຕໍ່ຄວາມສຳເລັດ ແລະ ຄວາມລົ້ມເຫຼວຂອງຜະລິດຕະພັນ OTOP ປະເພດຜ້າ ແລະ ເຄື່ອງແຕ່ງກາຍຂອງເມືອງສຸວັນນະພູມ ແຂວງຮ້ອຍເອັດ ທີ່ວ່າປັດໄຈດ້ານສະມາຊິກສ່ວນໃຫຍ່ເປັນຜູ້ທີ່ມີຄວາມຊຳນານ ແລະ ແນວຄິດສ້າງສັນໃນການພັດທະນາຜະລິດຕະພັນ ແລະ ປັດໄຈດ້ານການຜະລິດເຊັ່ນ ວັດຖຸດິບທີ່ໃຊ້ໃນການຜະລິດສ່ວນໃຫຍ່ແມ່ນມີຢູ່ໃນຊຸມຊົນ ແລະ ສາມາດຕອບສະໜອງໄດ້ໃນລະດັບຫຼາຍ, ສຳລັບປັດໄຈດ້ານແຮງງານ ໂດຍສ່ວນໃຫຍ່ແມ່ນກຸ່ມຄົນໃນຊຸມຊົນເປັນຫຼັກ ເຊິ່ງເປັນບຸກຄົນທີ່ມີຄວາມຊຳນານໃນການຜະລິດ ເພື່ອຫຼຸດບັນຫາດ້ານການຂາດແຄນແຮງງານ. ດ້ານປັດໄຈປັດໄຈດ້ານການຜະລິດ ມີການພົວພັນໄປໃນທິດທາງດຽວກັນກັບສັກກະຍະພາບໃນການຜະລິດ ແລະ ການພັດທະນາສິນຄ້າເພື່ອສ້າງເປັນສິນຄ້າ ODOP ຂອງປະຊາຊົນໃນ ນະຄອນຫຼວງພະບາງໃນລະດັບຫຼາຍ ເຊິ່ງສອດຄ່ອງກັບຜົນການສຶກສາຂອງ Phromsaka, Nakhon ແລະ Sangkharat (2013) ທີ່ສຶກສາແນວທາງໃນການພັດທະນາການດຳເນີນງານຂອງວິສາຫະກິດຊຸມຊົນໃນເຂດລຸ່ມທະເລສາບສົງຂາ ທີ່ວ່າ ປັດໄຈດ້ານການຜະລິດ ແລະ ການຕະຫຼາດເປັນປັດໄຈສຳຄັນທີ່ສົ່ງຜົນຕໍ່ການດຳເນີນງານຂອງວິສາຫະກິດຊຸມຊົນ ທັງໃນດ້ານການໃຫ້ຄວາມຮູ້, ການພັດທະນາທັກສະດ້ານຕ່າງໆ, ການສະໜັບສະໜູນດ້ານການຕະຫຼາດ ເພື່ອເພີ່ມໂອກາດໃນການແຂ່ງຂັນ. ສຳລັບປັດໄຈດ້ານການສະໜັບສະໜູນຈາກພາກສ່ວນກ່ຽວຂ້ອງເຊັ່ນ: ການສະໜັບສະໜູນຈາກຊຸມຊົນ, ການສະໜັບສະໜູນຈາກລູກຄ້າພາຍໃນ ແລະ ການສະໜັບສະໜູນຈາກພາກລັດ ແມ່ນມີຜົນໃນລະດັບຫຼາຍ ເຊິ່ງສອດຄ່ອງກັບບົດວິໄຈຂອງ Sanprasit (2017) ທີ່ສຶກສາປັດໄຈຄວາມສຳເລັດຂອງຜະລິດຕະພັນໜຶ່ງເມືອງໜຶ່ງຜະລິດຕະພັນທີ່ວ່າປັດໄຈໂດຍລວມແມ່ນມີຄວາມສຳຄັນໃນລະດັບຫຼາຍ ແລະ ພິຈາລະນາລາຍລະອຽດແຕ່ລະປະເດັນພົບວ່າ ຄຸນະພາບຂອງສິນຄ້າຕ້ອງເປັນມາດຕະຖານດຽວກັນ ມີຄວາມສຳຄັນໃນລະດັບຫຼາຍທີ່ສຸດ, ຮອງລົງມາແມ່ນຜະລິດຕະພັນໄດ້ຮັບຮອງມາດຖານ ມີຄວາມສຳຄັນໃນລະດັບຫຼາຍທີ່ສຸດ ແລະ ການສະໜັບສະໜູນຈາກພາກລັດ/ເອກະຊົນ ມີຄວາມສຳຄັນໃນລະດັບຫຼາຍ ແລະ ຜ່ານການວິເຄາະຄວາມສຳພັນດ້ວຍສົມຜົນຖົດຖອຍພະຫຸຄູນ ພົບວ່າ ປັດໄຈດ້ານລະດັບຄວາມຮັບຮູ້ກ່ຽວກັບສິນຄ້າ ODOP ຂອງປະຊາຊົນມີຄວາມສຳພັນກັບສັກກະຍະພາບໃນການຜະລິດ ແລະ ການພັດທະນາໃນລະດັບ 99% ນັ້ນຄື ເມື່ອປະຊາຊົນມີຄວາມຮັບຮູ້ກ່ຽວກັບສິນຄ້າ ODOP ຂອງປະຊາຊົນຫຼາຍຂຶ້ນ ຈະເຮັດໃຫ້ມີສັກກະຍະພາບໃນການຜະລິດ ແລະ ພັດທະນາສິນຄ້າເພື່ອສ້າງເປັນສິນຄ້າ ODOP ຫຼາຍຂຶ້ນ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Sakkatat ແລະ Kruekum ທີ່ສຶກສາປັດໄຈທີ່ມີຜົນຕໍ່ຄວາມສຳເລັດຂອງສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນໃນແຂວງຊຽງໃໝ່ ທີ່ວ່າຖ້າສະມາຊິກໃນກຸ່ມໄດ້ຮັບຂໍ້ມູນຂ່າວສານການຜະລິດສິນຄ້າຫຼາຍຂຶ້ນ ກໍ່ຈະເຮັດໃຫ້ໂອກາດປະສົບຜົນສຳເລັດຫຼາຍຂຶ້ນ.

ຜົນຂອງການວິເຄາະທ່າອ່ຽງດ້ານສັກກະຍະພາບໃນການຜະລິດ ແລະ ພັດທະນາສິນຄ້າເພື່ອສ້າງເປັນສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນ ຂອງປະຊາຊົນໃນນະຄອນຫຼວງພະບາງ ພົບວ່າ ຜູ້ຜະລິດມີທ່າອ່ຽງໃນການຜະລິດສິນຄ້າເພີ່ມຂຶ້ນໃນສັດສ່ວນທີ່ສູງຫຼາຍ ໂດຍການອອກແບບສິນຄ້າແມ່ນຈະເນັ້ນໃສ່ຄວາມເປັນເອກະລັກທ້ອງຖິ່ນ, ມີການປະສົມປະສານກັນລະຫວ່າງພູມປັນຍາແບບທ້ອງຖິ່ນ ແລະ ທັນສະໄໝເຂົ້າກັນ ເພື່ອສ້າງສີສັນ ແລະ ຜະລິດສິນຄ້າໃຫ້ຕອບສະໜອງ

ໄດ້ຕາມຍຸກສະໄໝ ແລະ ເນັ້ນການຜະລິດສິນຄ້າໄປຕາມ ຄວາມສາມາດ ແລະ ຄວາມຊຳນານສະເພາະດ້ານຂອງຕົນເອງເປັນຫຼັກ. ເຊິ່ງສອດຄ່ອງກັບຜົນການສຶກສາຂອງ Saithep (2017) ທີ່ສຶກສາໃນຫົວຂໍ້ ແນວທາງໃນການພັດທະນາຜະລິດຕະພັນທ້ອງຖິ່ນເພື່ອການສົ່ງອອກຂອງກຸ່ມວິສາຫະກິດດອກໄມ້ປະດິດ ເຂດແມ່ທະ ເມືອງແມ່ທະ ແຂວງ ລຳປາງ ທີ່ວ່າ ມີການຜະລິດເປັນແຕ່ລະຊ່ວງ ແລະ ປະລິມານ ການຜະລິດຂຶ້ນຢູ່ກັບການສັ່ງຊື້ຂອງລູກຄ້າເປັນຫຼັກ ແລະ ສອດຄ່ອງກັບຜົນການສຶກສາຂອງ Sioudomphan et al., (2019) ທີ່ສຶກສາພຶດຕິກຳການສິນຄ້າຂອງນັກທ່ອງທ່ຽວ ຕ່າງປະເທດໃນ ນະຄອນຫຼວງພະບາງ ທີ່ວ່ານັກທ່ອງທ່ຽວ ໄດ້ໃຫ້ຄຳແນະນຳໃນການປັບປຸງການຜະລິດ ແລະ ພັດທະນາ ສິນຄ້າຂອງປະຊາຊົນໃນ ນະຄອນຫຼວງພະບາງ ຄື: ການ ຜະລິດສິນຄ້າຕ້ອງເນັ້ນໃຫ້ເປັນການຜະລິດ ຫຼື ຂາຍສິນຄ້າທີ່ ຜະລິດຈາກຝີໄມ້ລາຍມືຂອງຄົນທ້ອງຖິ່ນ ຫຼື ສິນຄ້າທີ່ເປັນ ເອກະລັກຂອງທ້ອງຖິ່ນຢ່າງແທ້ຈິງ, ໃຫ້ນຳໃຊ້ວັດຖຸດິບໃນ ທ້ອງຖິ່ນເຂົ້າໃນການຜະລິດ ແລະ ມີການການຫຸ້ມຫໍ່ສິນຄ້າ ຫຼື ຜະລິດຕະພັນອັນເປັນມາດຖານ.

## 5. ສະຫຼຸບ

ຄວາມສາມາດໃນການຜະລິດ ແລະ ການພັດທະນາ ຜະລິດຕະພັນເພື່ອສ້າງເປັນສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນຂອງປະຊາຊົນ ນະຄອນຫຼວງພະບາງ ພົບວ່າ ປະຊາຊົນຜູ້ ຜະລິດສິນຄ້າຫັດຖະກຳ ແມ່ນມີຄວາມພ້ອມໃນການຜະລິດ ແລະ ການພັດທະນາຜະລິດຕະພັນເພື່ອສ້າງເປັນສິນຄ້າໜຶ່ງ ເມືອງໜຶ່ງຜະລິດຕະພັນຢູ່ໃນລະດັບຫຼາຍ. ໂດຍສະເພາະໃນ ດ້ານຄວາມຊ່ຽວຊານ ຫຼື ຊຳນານໃນການຜະລິດ, ວັດຖຸດິບ ທີ່ໃຊ້ໃນການຜະລິດ ແລະ ຮູບແບບ ຫຼື ວິທີການຜະລິດ. ພ້ອມນັ້ນ ປະຊາຊົນຜູ້ຜະລິດຍັງມີຄວາມສາມາດໃນການ ສ້າງຜະລິດຕະພັນໃຫ້ມີຄວາມເປັນເອກະລັກທ້ອງຖິ່ນ ແລະ ການກຳນົດລາຄາຂອງຜະລິດຕະພັນມີເໝາະສົມກັບຄຸນະພາບຂອງສິນຄ້າ, ສາມາດສ້າງຄຸນະພາບຂອງຜະລິດຕະພັນ ໃຫ້ໄດ້ຕາມມາດຕະຖານຕາມເງື່ອນໄຂຂອງຜະລິດຕະພັນ ຫຼື ສິນຄ້າໜຶ່ງເມືອງໜຶ່ງຜະລິດຕະພັນ ແຕ່ຍັງມີຄວາມສາມາດ ຜະລິດເພື່ອຕອບສະໜອງຕາມຄວາມຕ້ອງການຂອງສັງຄົມ ໄດ້ໃນລະດັບປານກາງເທົ່ານັ້ນ. ຜົນການວິເຄາະປັດໄຈທີ່ມີ ຄວາມສຳພັນກັບສັກກະຍະພາບໃນດ້ານການຜະລິດ ແລະ ການພັດທະນາຜະລິດຕະພັນ ເພື່ອສ້າງເປັນສິນຄ້າໜຶ່ງເມືອງ ໜຶ່ງຜະລິດຕະພັນໃນ ນະຄອນຫຼວງພະບາງ ພາບລວມມີ ຄວາມສຳຄັນຢູ່ໃນລະດັບຫຼາຍ ໂດຍປະກອບມີ ປັດໄຈການ ຜະລິດພາຍໃນ, ປັດໄຈດ້ານຄຸນຄ່າຂອງຜະລິດຕະພັນ, ປັດໄຈດ້ານປັດໄຈດ້ານຜົນໄດ້ຮັບ, ປັດໄຈດ້ານລະດັບຄວາມ ຮັບຮູ້ກ່ຽວກັບສິນຄ້າ ODOP ຂອງປະຊາຊົນ ແລະ ປັດໄຈ ດ້ານປະສົບການໃນການຜະລິດ ແລະ ພັດທະນາສິນຄ້າຂອງ ປະຊາຊົນ ມີການພົວພັນໄປໃນທິດທາງດຽວກັນກັບສັກກະຍະພາບໃນການຜະລິດ ແລະ ການພັດທະນາສິນຄ້າເພື່ອສ້າງ ເປັນສິນຄ້າ ODOP ຂອງປະຊາຊົນໃນນະຄອນຫຼວງພະບາງ. ສຳລັບການວິເຄາະທ່າອ່ຽງໃນການຜະລິດ ແລະ ການ ພັດທະນາສິນຄ້າເພື່ອສ້າງເປັນສິນຄ້າ ODOP ຂອງ ປະຊາຊົນໃນນະຄອນຫຼວງພະບາງ ພົບວ່າ: ຜູ້ຜະລິດແມ່ນມີ ທ່າອ່ຽງໃນການຜະລິດ ແລະ ພັດທະນານາເພີ່ມຂຶ້ນ ໂດຍ ເນັ້ນການອອກແບບຜະລິດຕະພັນ ໄປໃນດ້ານຄວາມເປັນ ເອກະລັກທ້ອງຖິ່ນໃຫ້ຫຼາຍຂຶ້ນ ແລະ ຍັງເນັ້ນໃສ່ຕາມຄວາມ ຕ້ອງການຂອງລູກຄ້າ ອີກດ້ວຍ. ພ້ອມທັງຈະມີການນຳໃຊ້ ພູມປັນຍາແບບປະສົມປະສານລະຫວ່າງ ພູມປັນຍາທ້ອງຖິ່ນ ແບບດັ້ງເດີມ ກັບການປະຫຍຸກຕາມຍຸກສະໄໝເຂົ້າກັນ ເພື່ອໃຫ້ສອດຄ່ອງຕາມຄວາມຕ້ອງການຂອງສັງຄົມ. ສຳລັບ ທ່າອ່ຽງດ້ານຄວາມສາມາດໃນການຕອບສະໜອງສິນຄ້າ ຂອງປະຊາຊົນ ພົບວ່າສ່ວນໃຫຍ່ຜູ້ຜະລິດແມ່ນຈະເນັ້ນການ ຜະລິດສິນຄ້າຕາມຄວາມສາມາດໃນການຜະລິດຂອງຕົນເອງເປັນຫຼັກ ແລະ ຈະເນັ້ນການຜະລິດສິນຄ້າຕາມການສັ່ງຊື້ ຂອງລູກຄ້າ; ໃນຂະນະດຽວກັນ ປະຊາຊົນຜູ້ເຮັດການຜະລິດ ສິນຄ້າ ກໍ່ຍັງມີຄວາມຕ້ອງການຄວາມຊ່ວຍເຫຼືອໃນການ ຜະລິດ ແລະ ພັດທະນາສິນຄ້າເພື່ອສ້າງເປັນສິນຄ້າໜຶ່ງເມືອງ ໜຶ່ງຜະລິດຕະພັນຢູ່ໃນລະດັບຫຼາຍ ໃນດ້ານ: ດ້ານການສ້າງ ພາບລັກ ແລະ ກາສິນຄ້າ, ການພັດທະນາຜະລິດຕະພັນ ແລະ ການບັນຈຸ, ການໃຫ້ຄຳປຶກສາທາງການຜະລິດ ຫຼື ທຸລະກິດ, ການໃຫ້ຄວາມຮູ້ກ່ຽວກັບການບໍລິຫານຈັດການວັດຖຸດິບ ແລະ ດ້ານການຕະຫຼາດ, ການໂຄສະນາປະຊາສຳພັນ, ດ້ານ ເຄື່ອງມືໃນການຜະລິດ ອີກດ້ວຍ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດ ພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ຄຳຂອບໃຈ

ພວກຂ້າພະເຈົ້າທີມງານຄົ້ນຄວ້າວິໄຈ ຂໍສະແດງຄວາມຂອບໃຈ ແລະ ຄວາມຮູ້ບຸນຄຸນເປັນຢ່າງຍິ່ງມາຍັງລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ໄດ້ໃຫ້ການສະໜັບສະໜູນທຶນຮອນໃນການຄົ້ນຄວ້າ (ງົບປະມານລັດຖະບານ ປີ 2021) ຈຶ່ງເຮັດໃຫ້ຈົນເຮັດໃຫ້ບົດຄົ້ນ ຄວ້ານີ້ສຳເລັດຜົນດ້ວຍດີ.

## 8. ເອກະສານອ້າງອີງ

Burapajattana, J. (2016). Development of Souvenir Textile Products of Ban Had Seao, Sukhothai, Journal of Arts and Architecture, University of Nareswar, Year 7, Issue 1, January - June 2016. P: 147-159.

Chumkate, J. (2017). Product Development from Local Wisdom to Increase an Efficiency of Community-Based Management with Sustainability in Thai-Muslim Village, Amphur Cha Am, Phetchaburi Province. Research grants from the Faculty of Management Science. Silpakorn University. P: 12-85.

Daoduean, S. (2013). Education and Packaging Design of Bamboo Fragrances for Products, Industrial Technology Lampang Rajabhat University Journal, Year 6, Issue 1, January - June 2013. P: 70-84.

Ministry of Industry and Trade. (2018). Report on the evaluation of the promotion of one product in one city and one product in the country. Ministry of Industry and Trade, Product Promotion Department, Vientiane.

Ministry of Industry and Trade. (2017). Agreement on one product, one city, one national product. Ministry of Industry and Trade, Vientiane.

Phahol Sakkatat and Phutthisun Kruekum. (2015). Factors Affecting on Success of One Tambon One Product (OTOP) in Chiang Mai. Journal of Agri. Research & Extension 35(1): 73-82.

Phromsaka, T., Nakhon, N., & Sangkharat, S. (2013). Development Guidelines for Small and Micro Community Enterprises in Songkhla Lake Basin. Academic Journal of the Faculty of Humanities and Social Sciences. P: 96-123.

Preedarat Rattanakom. (2011). A Study and Development of Processed Herb Products and Packaging for Communication Occupational Promotion. Master thesis, M.F.A. (Design Innovation). Bangkok; Graduate School, Srinakharinwirot University. P: 75-155.

Tourists inLuangPrabang City. Souphanouvong Journal of Multidisciplinary Research and Development ISSN 2521-0653. Volume 7. Issue 1. Jan – Jun 2021. Page 168-176.

Saithep, K. (2017). Guidelines for the development of local products for export of the flower enterprise group, Mae Tha District, Lampang Province. Journal of Modern Management, Year 10, Issue 2 (July-December 2017). P:1-11

Sanprasit, W. (2017). The Success Factors of OTOP. Journal of Information, Year 16, Issue 2 (July – December 2017). P:148-158

Sanguanpauk, K., & and Rodploy, J. (2021). Approaches for Potential Development of a Local Herb Processing Community Enterprise in Ban Sai Subdistrict, Ban Mi District, Lop Buri Province, Journal of Business Administration and Social Sciences Ramkhamhaeng University, Year

4, Issue 3, September-December 2021, P:64-84

Soutthavone Sioudomphan, S., Youtthasack Kingsada, Y., Vanhxay Thammavong, V., Somyoth Layaseang, S., & Ounphouvong, S. (2021). Behaviors towards purchasing goods by foreign

Thongkern, T. (2020). The Development of Herbal Products following the Community Product Standard Affecting Willingness to Pay Behavior: A Case Study of Massage for Health Group of Wat Klong Kang, Amphur Muang, Nakhon Sawan Province. Social Sciences Research and Academic Journal. Year 15, Issue 3, September – December 2020. P: 17-28.

Waentip, C., & Pilun, K. (2016). Factors Effecting the Success and Failure of OTOP Fabric and Clothing of Suwannaphum District, Roi-et Province, Journal of Politics, Administration, Management, Human Resource Management, Policy, Year 6, Issue 1 (September 2015). P: 66-81.